# ບົດທີ 10

# ວິທີການຕຽມບົດເທດສະໜາ




**1** ພວກເຮົາໄດ້ຮຽນມາກ່ຽວກັບຄຳເທດສະໜາຢູ່ຈ້າຍພູແລ້ວພະເຢຊູ ຄືນັກເທດທີ່ດີທີ່ສຸດແລະເປັນການເໝາະສົມ ທີ່ເຮົາຈະເອົາພະເຢຊູມາເປັນຕົວຢ່າງໃນການເທດສະໜາອີກດ້ວຍ. ເຮົາຈະຮຽນຄືນໜ້ອຍໜຶ່ງເລື່ອງກົດລະບຽບແຫ່ງອານາຈັກເຊິ່ງເຮົາເຫັນໃນຄຳເທດສະໜານັ້ນແລ້ວເຮົາຈະຮຽນວິທີຕຽມບົດເທດໄວ້.

ກ. ຄຳເທດສະໜາຂອງພະເຢຊູຢູ່ຈ້າຍພູແມ່ນມີໃນ ມັດທາຍ ບົດໃດ ຂໍ້ໃດ? ____________

ຂ. ຄຳເທດສະໜານັ້ນແຍກເປັນຈັກສ່ວນທີ່ທ່ານຮຽນໃນບົດຜ່ານມາ? ________________

ຄ. ການແຍກຄຳເທດສະໜາຢູ່ຈ້າຍພູເປັນສ່ວນໆນັ້ນສະແດງວ່າເຮົາຮຽນດ້ວຍວິທີໃດ? ____

**2** ແຕ່ຍັງມີຕົວຢ່າງອີກປະການໜຶ່ງ ໃຫ້ທ່ານເປີດເບິ່ງລູກາ ບົດ 24 ເມື່ອ ພະເຢຊູເດີນທາງໄປເອມານູອູດກັບສາວົກ ສອງຄົນພະອົງອະທິບາຍຫຍັງໃຫ້ເຂົາຟັງ? (ອ່ານຂໍ້ 27) ___________

**3** ໃນຂໍ້ 32 ພະອົງອະທິບາຍຫຍັງໃຫ້ເຂົາຟັງ? __________________________________

**4** ໃນຂໍ້ 45 ພະອົງໄດ້ຊົງບັນດົນຈິດໃຈຂອງເຂົາເພື່ອໃຫ້ເຂົາໄດ້ເຂົ້າໃຈຫຍັງ? ____________

**5** ກ. ດັ່ງນັ້ນປາກົດວ່າພະເຢຊູ ສອນຈາກຫຍັງເປັນຕົ້ນ? __________________________
ຂ. ໃນຄຳເທດສະໜາຂອງເຮົາສົມຄວນຈະເອົາຫຍັງເປັນຫຼັກພື້ນຖານ? ______________

**6** ໃນລາຍຊື່ຕໍ່ໄປນີ້ພວກເຮົາຄວນຈະເອົາອັນໃດມາເປັນແຫຼ່ງກຳເນີດໃນການເທດສະໜາຂອງເຮົາ? (ເລືອກ)

_______ ຄວາມຝັນ _______ ວິທະຍຸ
_______ ພະຄຳພີ _______ ຄຳແນະນຳຂອງໝູ່
_______ ຄວາມຄິດເຫັນຂອງຕົວເອງ

**7** ແນ່ນອນວ່າເຮົາອາດຈະຍົກຕົວຢ່າງຫຼືຄຳປຽບທຽບຈາກຊີວິດປະຈຳວັນໄດ້. ປະສົບປະການຂອງຄູດສະຕຽນຄົນ ອື່ນ ໆ ກໍ່ດີຢູ່ດ້ວຍແຕ່ວ່າສິ່ງເຫຼົ່ານັ້ນບໍ່ສົມຄວນຈະເປັນຫຼັກຖານຈັກເທື່ອເອົາແຕ່ພະຄຳພີຢ່າງດຽວເປັນຫຼັກ ແລ້ວຕໍ່ໄປເອົາຄວາມປຽບທຽບ ຫຼື ຄຳພິຍານມາເປັນທີ່ສະນັບສະໜູນ. ໃຫ້ທ່ານກວດເບິ່ງສ່ວນປະກອບຂອງຄຳເທດສະໜາຕໍ່ໄປນີ້:

<u>ບົດເທດສະໜາ ກ.</u>

| | |
|---|---|
| ຄຳພິຍານ 2 ປະການ | 20 ນາທີ |
| ຂໍ້ພະຄຳພີ 2 ຂໍ້ທີ່ເວົ້າຄືນລະເລື່ອງ | 3 ນາທີ |
| ລວມທັງໝົດເປັນ | 23 ນາທີ |

<u>ບົດເທດສະໜາ ຂ.</u>

| | |
|---|---|
| ຄຳຕະຫຼົກ 2 ປະການ | 5 ນາທີ |
| ເລື່ອງຄົນດີພະຍາດດ້ວຍອຳນາດຂອງ ພະເຈົ້າ | 15 ນາທີ |
| ຂໍ້ພະຄຳພີ 2 ຂໍ້ | 5 ນາທີ |
| ລວມທັງໝົດ | 25 ນາທີ |

<u>ບົດເທດສະໜາ ຄ.</u>

| | |
|---|---|
| ຄຳອະທິບາຍຕອນພະຄຳພີ | 15 ນາທີ |
| ຕົວຢ່າງ 2 ປະການຈາກຊີວິດປະຈຳວັນ | 5 ນາທີ |
| ຂໍ້ພະຄຳພີທີ່ອ້າງເຖິງຫົວເລື່ອງ | 3 ນາທີ |
| ທັງໝົດເປັນ | 23 ນາທີ |

ໃນບົດເທດສະໜາ ກ. ຂ. ແລະ ຄ. ນັ້ນ ແມ່ນບົດໃດທີ່ອະທິບາຍຈາກພະຄຳພີຫຼາຍກວ່າ?

______________________________________________________________

ແລະ ບົດໃດທີ່ຍົກເລື່ອງຢ່າງເໝາະສົມ? _______________________________

**8** ຖ້າວ່າເຮົາຈະເອົາ ພະເຢຊູ ມາເປັນຕົວຢ່າງເຮົາຈະເລືອກໄດ້ຫຼັກຖານທີ່ຖືກຕ້ອງຢູ່ສະເໝີ. ຫຼັກພື້ນຖານຂອງບົດເທດສະໜາທີ່ດີ ມາຈາກໃສ? _______________________________

**9** ເຖິງວ່າຈຸດໝາຍປາຍທາງແມ່ນທີ່ຈະສອນພະຄຳພີກໍ່ຕາມແຕ່ພຽງອະທິບາຍຄວາມໝາຍຢ່າງດຽວບໍ່ພໍ ຢ້ານວ່າຜູ້ ຟັງຈະບໍ່ປະຕິບັດຕາມຜົນຂອງຄວາມເທດສະໜາຄືນັກເທດແລະຜູ້ຟັງຈະດຳເນີນຊີວິດຕາມພະຄຳພີ. ຂໍໃຫ້ເປີດອ່ານ 2 ຕີໂມທຽວ 3:15-17 ໃນຂໍ້ 15 ບອກວ່າ ພະທຳສາມາດໃຫ້ເຮົາມີປັນຍາທີ່ຈະນຳໄປເຖິງຄວາມຫຍັງ? ____________________________

**10** ດັ່ງນັ້ນເຮົາຄວນຈະສອນພະຄຳພີຈົນກວ່າຜູ້ທີ່ບໍ່ໄດ້ລອດພົ້ນເທື່ອຈະຮັບເຊື່ອແລ້ວໄດ້ຫຍັງ? __________________ ໝາຍຄວາມວ່າເຂົາຈະຮັບເອົາພະເຢຊູເປັນພະຜູ້ຊ່ວຍໃຫ້ພົ້ນ.

**11** ສ່ວນຄົນທີ່ບໍ່ເປັນຄຼິດສະຕຽນເທື່ອເຮົາມີເປົ້າໝາຍໃດໃນການເທດສະໜາ? ____________

**12** ໃນ 2 ຕມທ 3:17 ກ່າວວ່າພະຄຳຂອງ ພະເຈົ້າເປັນປະໂຫຍດເພື່ອຄົນຂອງ ພະເຈົ້າບັນລຸຜົນ __________________ ແລະ ຈັດຕຽມໄວ້ພ້ອມສຳລັບການ ________ ທຸກຢ່າງ. (ຕື່ມຄວາມທີ່ຂາດໃສ່ບ່ອນວ່າງ)

**13** ດັ່ງນັ້ນເມື່ອເຮົາເທດສະໜາຕໍ່ຄົນທີ່ບໍ່ເຊື່ອເທື່ອ ຄວນມີເປົ້າໝາຍວ່າຈະໃຫ້ເຂົາຮັບເຊື່ອໃນໃຜ?

______________________________________________________________

**14** ຖ້າວ່າເທດສະໜາຕໍ່ຄົນທີ່ເຊື່ອແລ້ວຈະໃຫ້ບັນລຸຜົນເຖິງຂັ້ນໃດ? ____________________

**15** ເມື່ອເຮົາຈະຕຽມຕົວເທດສະໜາເຮົາຄວນຈະຊອກຫາຫຼັກພື້ນຖານຈາກໃສ? ___________

**16** ກ. ໃນເມື່ອເຮົາມີໂອກາດຈະເທດສະໜາຕໍ່ຄົນທີ່ບໍ່ເຊື່ອເທື່ອ ເຮົາຄວນຈະມີເປົ້າໝາຍໃດ?

______________________________________________________________

ຂ. ຖ້າວ່າເທດສະໜາຕໍ່ຜູ້ທີ່ເຊື່ອແລ້ວເດ? ____________________________________

**17** ຖ້າວ່າທ່ານເທດສະໜາມາແລ້ວ ທ່ານຢາກໃຫ້ຜູ້ຟັງປະພຶດຕອບຢ່າງໃດ? ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ.

ກ. ຢາກໃຫ້ຜູ້ບໍ່ເຊື່ອເທື່ອມາຖິ້ມໃຈເກົ່າເອົາໃຈໃໝ່

ຂ. ຢາກໃຫ້ເຂົາປະຈົບປະແຈງວ່າເຮົາເປັນນັກເທດທີ່ດີຫຼາຍ

ຄ. ຢາກໃຫ້ຜູ້ທີ່ເຊື່ອມາປະຕິບັດຊີວິດຕາມພະຄຳພີສອນ

ງ. ຢາກໃຫ້ຜູ້ຟັງສາມາດໂຕ້ວາທີກັບໝູ່ເລື່ອງໃນພະຄຳພີ.

**18** ຖ້າວ່າເຮົາຈະໃຊ້ພະຄຳພີເປັນຫຼັກພື້ນຖານບົດເທດສະໜາ ພື້ນຖານນັ້ນຈະບໍ່ສິ້ນສຸດຈັກເທື່ອແຕ່ເຖິງວ່າຈະໃຊ້ແຕ່ ຂໍ້ພະຄຳພີຢ່າງດຽວກໍ່ຕາມເຮົາຍັງຫຼົງທາງຜິດກໍ່ໄດ້ຄືໃນບົດເທດສະໜາດັ່ງຕໍ່ໄປນີ້: ຕັ້ງຕົ້ນດ້ວຍຍົກຂໍ້ພະຄຳພີຂໍ້ໜຶ່ງແລ້ວອະທິບາຍອີກຂໍ້ບໍ່ຄົບຖ້ວນ ເລີຍໄປຊອກຫາຂໍ້ທີ່ 3 ຈົນພົບ ເປີດອ່ານອີກຂໍ້ໜຶ່ງຈາກພະຄຳພີເດີມໃຫ້ຜູ້ຟັງອ່ານອີກຂໍ້ທີ 5 ຍົກທ່ອງປາກເປົ່າອີກຂໍ້ໜຶ່ງດ້ວຍບໍ່ຕ້ອງອ່ານ ຍົກເລື່ອງອີກຈາກຂໍ້ໜຶ່ງແຕ່ຊອກຫາບໍ່ພົບ. ໃຫ້ທີ່ປະຊຸມລວມກັນອ່ານອີກຂໍ້ຕໍ່ໄປເຊັ່ນ ຂໍ້ 8 ແລະ ອະທິບາຍເລື່ອງຂໍ້ສຸດທ້າຍແລ້ວກໍ່ຈົບ ພວກຜູ້ຟັງໃນປະຊຸມຈະເປັນຢ່າງໃດ? ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ

ກ. ເຂົາສົນໃຈຫຼາຍແລ້ວຈື່ເລື່ອງໝົດ. ຂ. ເຂົາຈະເບື່ອ

ຄ. ຈະງົງ ຫຼື ສັບສົນ. ງ. ຈະລືມສ່ວນຫຼາຍ.

**19** ຂໍ້ພະຄຳພີທີ່ຈະຍົກມາເທດນັ້ນອາດຈະປະກອບດ້ວຍຫຼາຍຂໍ້ທີ່ຕໍ່ກັນໄປເຊິ່ງເວົ້າເຖິງເລື່ອງດຽວກັນ. ຖ້າວ່າທ່ານ ຈະຕຽມບົດເທດສະໜາໄວ້ ທ່ານຈະຍົກຕອນພະຄຳພີຢ່າງໃດທີ່ດີທີ່ສຸດ? ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ

ກ. ຍົກຕອນພະຄຳພີມາຫຼາຍຕອນ.

ຂ. ບໍ່ຍົກຂໍ້ພະຄຳພີມາຈັກຕອນເພື່ອບໍ່ໃຫ້ຜູ້ຟັງສັບສົນ.

ຄ. ຍົກຕອນພະຄຳພີຕອນດຽວມາເທດ

**20** ໃນຄຳເທດສະໜາສາມປະການຕໍ່ໄປນີ້ ແມ່ນຄຳເທດສະໜາໃດທີ່ໃຊ້ແຕ່ຕອນດຽວຈາກພະຄຳພີ? (ເລືອກ)

ກ. ອັນທີ່ຍົກເລື່ອງຈາກ ແກະທີ່ເສຍແດ່ ນິໂກເດມແດ່ ແລະ ຍິງຊາວຊາມາເລຍແດ່.

ຂ. ຍົກຂໍ້ຈາກການທົດລອງ ພະເຢຊູ.

ຄ. ບົດເທດສະໜາເລື່ອງເງິນທີ່ເສຍ ທີ່ໄປໂລຫຼົບຕັ້ງໃຈໃໝ່ແດ່ ແລະຄຳອຸປະມາເລື່ອງພວກຟາລິຊາຍແລະຄົນ ເກັບພາສີໃນຄຳເທດສະໜາ 3 ປະການເຫິງນັ້ນມີຫຼັກພື້ນຖານຢ່າງໝັ້ນຄົງຈາກພະຄຳພີ ແຕ່ວ່າຂໍ້ໃດທີ່ຜູ້ຟັງ ຈະເຂົ້າໃຈງ່າຍກວ່າກັນ? ____________________

**21** ຈຸດໝາຍໃຫຍ່ໃນຄຳເທດສະໜາກໍ່ຄືຈະຕ້ອງໃຫ້ຜູ້ຟັງປະຕິບັດຕາມພະຄຳພີ ແຕ່ການປະຕິບັດຊີວິດຕາມພະຄຳ ອາດປາກົດມາໃນຫຼາຍແງ່ຄື:

ເຂົາອາດຈະຖິ້ມໃຈເກົ່າເອົາໃຈໃໝ່ ຮັບເຊື່ອໃນ ພະເຢຊູ

ເຂົາອາດຈະຖະຫວາຍເງິນໜຶ່ງສ່ວນສິບ

ເຂົາອາດຈະເປັນພິຍານຕໍ່ເພື່ອນບ້ານ

ເຂົາຈະເລີ້ມຕົ້ນຕໍ່ສູ້ພະຍາມານ

ເຂົາຈະຫຼີກບໍ່ເວົ້າຂວັນນິນທາຜູ້ອື່ນອີກຕໍ່ໄປ

ເຂົາຈະຊ່ວຍຄົນທຸກຍາກ

ເຂົາຈະຕັ້ງຕົ້ນອ່ານພະຄຳພີທຸກວັນ

ເຂົາຈະມາຮ່ວມອ້ອນວອນກັບໝູ່ ໆລໆ

ການປະຕິບັດຕາມພະຄຳມີຫຼາຍວິທີທາງ ຖ້າວ່າຈະເທດສະໜາເລື່ອງທຸກວິທີທາງໃນບົດເທດສະໜາບົດດຽວຈະໄດ້ບໍ່? (ເລືອກໝາຍເອົາຂໍ້ທີ່ຖືກ)

ກ. ບໍ່ໄດ້ ຂ. ອາດຈະໄດ້ ຄ. ໄດ້ບໍ່ໄດ້ກໍ່ບໍ່ຮູ້.

**22** ຖ້າວ່າມີເປົ້າໝາຍຫຼາຍປະການໂພດໃນບົດເທດສະໜາບົດດຽວເລີຍບໍ່ໄດ້ຈັກຢ່າງ! ຈະແກ້ໄຂຢ່າງໃດ? (ເລືອກ)

ກ. ເຊົາບໍ່ເທດສະໜາຕໍ່ໄປ

ຂ. ເທດສະໜາແຕ່ເລື່ອງເກົ່າຫຼາຍເທື່ອ ຈົນກວ່າຜູ້ຟັງຈະປະຕິບັດຕາມພະຄຳພີໃນທຸກປະການ

ຄ. ຈຳກັດຄຳເທດສະໜາໄວ້ເທື່ອລະເລື່ອງ.

**23** ດັ່ງນັ້ນເຫັນວ່າເຮົາຄວນຈະເທດສະໜາເທື່ອລະເລື່ອງແລະຍົກຕົວຢ່າງຕອນພະຄຳພີມາເປັນຫຼັກຈັກຕອນ? ______________________________

ຄືໃນແຕ່ລະບົດເທດສະໜາເຮົາຄວນຍົກຕອນພະຄຳພີ <u>ເທື່ອລະຕອນ</u> ແລະ ຊັກຊວນໃຫ້ຜູ້ຟັງປະຕິບັດຕາມພະຄຳພີ <u>ເທື່ອລະປະການ</u>

**24** ກ. ເປົ້າໝາຍໃນຄຳເທດສະໜາໃຫ້ຄົນທີ່ບໍ່ເຊື່ອຄືຫຍັງ? ______________________

ຂ. ສຳລັບຄົນທີ່ເປັນຄຣິດສະຕຽນແລ້ວ ຈະໃຫ້ດຳເນີນຊີວິດຕາມຫຍັງ? ______________

**25** ຄຳເທດສະໜາປະກອບດ້ວຍການ ອະທິບາຍ ຕາມພະຄຳພີສ່ວນຫຼາຍ ແຕ່ເພື່ອຈະໃຫ້ເກີດດອກອອກຜົນໃນຊີ ວິດຂອງຜູ້ຟັງສົມຄວນຈະມີສ່ວນ ນຳມາໃຊ້ ດ້ວຍ.

ຄຳອະທິບາຍ ຄືວ່າດ້ວຍຄວາມໝາຍໃນຕອນພະຄຳພີນັ້ນ

ຄຳນຳມາໃຊ້ ວ່າດ້ວຍການປະຕິບັດຕາມພະຄຳພີໃນຊີວິດຂອງຜູ້ຟັງ

ໃນປະໂຫຍກ 6 ປະການຕໍ່ໄປນີ້ ຂໍ້ໃດເປັນການຕີຄວາມໝາຍໃຫ້ຂຽນຄຳວ່າ "ອະທິບາຍ" ປະໂຫຍກໃດທີ່ວ່າດ້ວຍການປະຕິບັດຕາມພະຄຳພີໃຫ້ຂຽນຄຳວ່າ "ນຳມາໃຊ້"

(ເບິ່ງຕົວຢ່າງຂໍ້ ກ. ແລະ ຂ.)

ອະທິບາຍ ກ. ມານທົດລອງ ພະເຢຊູ 40 ວັນ.

ນຳມາໃຊ້ ຂ. ເຊັ່ນດຽວກັນກັບ ພະເຢຊູ ເຮົາຕ້ອງສູ້ການທົດລອງ.

________ ຄ. ພະເຢຊູບໍ່ໄດ້ໃຊ້ອຳນາດພະເຈົ້າແຕ່ຕໍ່ສູ່ການທົດລອງດ້ວຍໃຊ້ອາວຸດຢ່າງດຽວກັນກັບພວກເຮົາ.

________ ງ. ພວກເຮົາບໍ່ສົມຄວນຈະໃຊ້ພອນສະຫວັນທີ່ ພະເຈົ້າປະທານໃຫ້ເຮົາພື່ອປະໂຫຍດສ່ວນຕົວ.

________ ຈ. ພະຍາມານ ຍົກຂໍ້ພະຄຳພີມາປິ້ນຄວາມໝາຍມາໃຊ້ເພື່ອຕົວເອງ.

________ ສ. ພວກເຮົາຈິ່ງລະວັງຕົວຢ່າໃຊ້ພະຄຳພີໄປໃນທາງທີ່ຜິດ.

*ໃນຄຳເທດສະໜາເຮົາຕ້ອງອະທິບາຍກ່ອນແລະຕໍ່ໄປນຳມາໃຊ້ໃນຊີວິດປະຈຳວັນ. ແຕ່ການອະທິບາຍກ່ອນ ແລະ ນຳມາໃຊ້ ທີຫຼັງ ຕົກຢູ່ສອງລະບົບດັ່ງຕໍ່ໄປນີ້ກໍ່ໄດ້ຄື:*

| ເທື່ອລະເລັກລະນ້ອຍ | | ເອົາໝົດເລື່ອງກ່ອນ |
|---|---|---|
| ອະທິບາຍ | ນຳມາໃຊ້ | ອະທິບາຍໝົດເລື່ອງ ໃຫ້ຄົບຖ້ວນເສຍກ່ອນ |
| ອະທິບາຍ | ນຳມາໃຊ້ | |
| ອະທິບາຍ | ນຳມາໃຊ້ | ຈິ່ງຄ່ອຍນຳມາໃຊ້ ໃຫ້ປະຕິບັດຕາມທີຫຼັງ |
| ອະທິບາຍ | ນຳມາໃຊ້ | |

**26** ເຊັ່ນດຽວກັນກັບຄຳຖາມ 20 ນັ້ນ ໃຫ້ຂຽນຄຳວ່າ "ອະທິບາຍ" ແລະ "ນຳມາໃຊ້" ຕາມທີ່ເໝາະສົມ.

____________ ກ. ພະເຢຊູ ໄດ້ຊະນະຜີມານດ້ວຍໃຊ້ພະຄຳພີແລະພະວິນຍານ

____________ ຂ. ເຊັ່ນດຽວກັນຊີວິດສະຕຽນເຮົາທຸກຄົນມີພະຄຳຂອງ ພະເຈົ້າ ແລະ ພະວິນຍານບໍລິສຸດ ເຊິ່ງຊົງໃຊ້ເປັນເຄື່ອງອາວຸດຕໍ່ສູ້ມານ.

ບາດກ້າວສອງປະການຂ້າງເທິງນັ້ນຖືກຕາມລຳດັບບໍ່? ________________________

**27** ໃນແຕ່ລະບົດເທດສະໜາສົມຄວນຈະມີສ່ວນປະກອບສອງສ່ວນຄື:

ກ. ສ່ວນທີ່ວ່າດ້ວຍຄວາມໝາຍໃນຕອນພະຄຳພີຄືຫຍັງ? ______________________

ຂ. ສ່ວນທີ່ຈະຊັກຊວນໃຫ້ປະຕິບັດຊີວິດຕາມພະຄຳພີຄືຫຍັງ? __________________

ຄ. ໃນສອງສ່ວນນັ້ນຈະເອົາສ່ວນໃດກ່ອນ? ________________________________

**28** ໃນທີ່ເຮົາຈະເລີ້ມຕົ້ນເທດສະໜາຄວນຈະມີຄຳແນະນຳ ແລະ ຄຳແນະນຳເປັນອັນທີ່ຈະສະເໜີເລື່ອງໃຫ້ຜູ້ຟັງຮັບ ຮູ້ກ່ອນ ຄົນທີ່ນັ່ງຟັງນັ້ນກຳລັງຫ່ວງຫຼາຍຢ່າງ ບາງຄົນອາດຄິດເຖິງຄວາຍທີ່ມັດໄວ້ກ້ອງຕະລ່າງເຮືອນ ແມ່ຍິງກໍ່ຄິດຫ່ວງລູກ ແຕ່ຈຸດປະສົງຂອງທ່ານຄືຢາກຈະໃຫ້ເຂົາຟັງພະຄຳຂອງ ພະເຈົ້າ. ທ່ານຢາກຈະໃຫ້ເຂົາຄິດເຖິງຫຍັງ? (ເລືອກ)

ກ. ເລີກປະຊຸມແລ້ວຈະກິນຫຍັງ.

ຂ. ເບິ່ງຄົນອື່ນທີ່ນັ່ງໃນປະຊຸມ.

ຄ. ສຽງປາກຂອງນັກເທດນ້ອຍໃຫຍ່ປານໃດ.

ງ. ຕອນພະຄຳພີທີ່ນັກເທດຈະຍົກມາກ່າວ.

ຈ. ເດັກນ້ອຍອາດຈະຄິດຫ່ວງບົດເສັງໃນໂຮງຮຽນ

ສ. ຄວາຍຢູ່ຕະລ່າງເຮືອນຈະປອດໄພດີບໍ່.

**29** ແນ່ນອນທ່ານຢາກຈະໃຫ້ເຂົາຄິດເຖິງພະຄຳຂອງ ພະເຈົ້າແຕ່ເພື່ອຈະຈັບຄວາມສົນໃຈຂອງເຂົາທ່ານຕ້ອງຍົກ ເລື່ອງ ໃຫ້ເປັນທີ່ຈັບໃຈເຂົາຫຼາຍກວ່າເລື່ອງອື່ນ ໆ ກ່ຽວກັບຄອບຄົວ. ຜູ້ໃດກໍ່ຮູ້ວ່າຕອນພະຄຳພີສຳຄັນກວ່າໂຕ ຄວາຍທີ່ມັດໄວ້ກ້ອງຕະລ່າງແທ້! ແຕ່ທ່ານເວົ້າບໍ່ເປັນທີ່ຈັບໃຈເຂົາກ່ອນຈະຍົກເລື່ອງພະຄຳພີ ເຊັ່ນທ່ານຂຶ້ນໄປເລີ້ມຕົ້ນປາກສຽງບໍ່ມ່ວນແລະເວົ້າຫົວຂໍ້ເລື່ອງຈະເທດສະໜາທັນທີວ່າ "ອ້າຍນ້ອງເອີຍມື້ນີ້ເຮົາຈະເທດສະໜາເລື່ອງຄຳ ອ້ອນວອນ..." ມີພວກໃດທີ່ສົນໃຈ? (ເລືອກ)

ກ. ທຸກຄົນໃນປະຊຸມ.

ຂ. ແຕ່ສະເພາະຜູ້ທີ່ສົນໃຈໃນການອ້ອນວອນ.

ຄ. ແຕ່ສະເພາະຜູ້ທີ່ບໍ່ມັກອ້ອນວອນ.

**30** ແຕ່ຄົນມີພວກໜຶ່ງທີ່ບໍ່ມັກອ້ອນວອນ ແມ່ນສະເພາະພວກດຽວກັນນັ້ນທີ່ສົມຄວນຈະຟັງຄຳເທດສະໜາ ກ່ຽວກັບການອ້ອນວອນຈະເຮັດຢ່າງໃດທີ່ຈະໃຫ້ເຂົາສົນໃຈຟັງເລື່ອງຄຳອ້ອນວອນເນາະ! ສົມຄວນຈະຊອກຫາວິທີຈັບໃຈເຂົາຄຳແນະນຳນັ້ນແຫຼະ ສົມຄວນຈະໃຫ້ຈັບໃຈເຂົາໃຫ້ເຂົາຢາກຟັງ. ຄຳແນະນຳມີຈຸດປະສົງວ່າຈະຍຶດເອົາຄວາມຄິດຂອງເຂົາບໍ່ໃຫ້ຄິດເລື່ອງຄວາຍເລື່ອງລູກ ຫຼື ອື່ນ ໆ.




ເພື່ອຈະໃຫ້ຈັບໃຈຜູ້ຟັງຄຳແນະນຳຈະຕ້ອງເຮັດໃຫ້ເຂົາສົນໃຈຫຍັງ ຫຼາຍກວ່າຈະສົນໃຈສິ່ງແວດລ້ອມ? ________________________________________________

**31** ກ່ຽວກັບຄຳແນະນຳນັ້ນຕ້ອງວາງແຜນດີໆກ່ອນ ຈຸດປະສົງໃນຄຳແນະນຳແມ່ນເຮັດໃຫ້ຈັບຄວາມສົນໃຈຜູ້ຟັງເພື່ອ ໃຫ້ເຂົາຢາກຮູ້ເລື່ອງພະຄຳພີ ດັ່ງນັ້ນຄຳແນະນຳມີເປົ້າໝາຍວ່າຈະໃຫ້ເຂົາຟັງພະຄຳພີ ກ່ອນຈະຄິດຫ່ວງສິ່ງໃດ? ____________________________________

**32** ໃນຕົວຢ່າງ 7 ປະການຕໍ່ໄປນີ້ ອັນໃດອາດຈະຈັບໃຈຜູ້ຟັງຈຶ່ງຈະເປັນຄຳແນະນຳໄດ້? (ໃຫ້ໝາຍ ໄວ້)

ກ. ______ ຍົກສະເໜີຄຳຖາມຈາກພະຄຳພີທີ່ໃຫ້ເຂົາຢາກຮູ້ຢາກເຫັນ.

ຂ. ______ ການວິເຄາະກ່ຽວກັບຕົວເອກອະນຸພາບ

ຄ. ______ ຍົກເລື່ອງຈາກຊີວິດປະຈຳວັນທີ່ພົວພັນກັບຕອນພະຄຳພີໃນບົດເທດ.

ງ. ______ ຍົກຕົວຢ່າງວ່າຕອນພະຄຳພີໃນບົດເທດນີ້ ຈະເປັນຜົນປະໂຫຍດຢ່າງໜຶ່ງຢ່າງໃດໃນຊີວິດປະຈຳວັນ.

ຈ. ______ ຍົກສຸພາສິດຂອງພະຄຳພີເດີມມາປຽບກັບສຸພາສິດຂອງຄົນທົ່ວໄປ

ສ. ______ ຄົນສ່ວນຫຼາຍຄິດຢ່າງໃດແລະພະຄຳພີສອນວ່າຢ່າງໃດ

ຊ. ______ ເອົາຮູບຫຼືສິ່ງຂອງໜຶ່ງໃດມາເປັນສັນຍາລັກເລື່ອງທີ່ຈະສອນ.

**33** ຫຼັງຈາກຄຳແນະນຳຜູ້ເທດຍັງຕ້ອງຍົກຕອນພະຄຳພີມາ __________________________ ຫໍຜູ້ຟັງເຂົ້າໃຈດີແລະ ________________________ ໃນຊີວິດດ້ວຍ. (ຕື່ມຄວາມທີ່ຂາດ)

**34** ກ. ຄວນຊອກຫາຫຼັກພື້ນຖານບົດເທດສະໜາມາຈາກໃສ? ______________________

ຂ. ທຳມະດາຈະຍົກຈັກຕອນຂອງພະຄຳພີເປັນຫຼັກໃນບົດເທດສະໜາ? ______________

ຄ. ຖ້າວ່າຈະໃຫ້ຜູ້ຟັງປະຕິບັດຕາມພະຄຳພີໃນບົດເທດສະໜານັ້ນ ຈະເນັ້ນຄຳການປະຕິບັດເທື່ອລະຈັກຕອນ? ____________________

**35** ເມື່ອຈະເລີ້ມຕົ້ນເທດສະໜາຕ້ອງມີຫຍັງກ່ອນ? ____________________

**36** ຈຸດປະສົງໃນການແນະນຳຄືຫຍັງ? ____________________

____________________

**37** ໃຫ້ທ່ານແຕ່ງຕົວຢ່າງຄຳແນະນຳທີ່ອາດຈະຈັບຄວາມສົນໃຈຂອງຜູ້ຟັງ? ____________________

____________________

____________________

**38** ຫຼັງຈາກຄຳແນະນຳແລ້ວຍັງມີອີກສອງປະການໃດ? (ຈົ່ງຕື່ມຄວາມທີ່ຂາດ)

ຕ້ອງ ____________________ ຕອນພະຄຳພີ.

ຕ້ອງ ____________________ ຕອນພະຄຳພີນັ້ນ ____________________

**39** ຂໍໃຫ້ເປີດເບິ່ງໜ້າປົກບົດນີ້ ແລ້ວເບິ່ງຮູບແຕ້ມຮູບນັ້ນສະແດງຫຍັງກ່ຽວກັບວິທີແຕ່ງບົດເທດສະໜາ? ____________________

____________________

**40** ດີຂຶ້ນຫຼາຍແລ້ວເພາະແຕ່ຫຼາຍເດືອນຜ່ານມາເຮົາໄດ້ຮຽນເລື່ອງການແຍກເປັນສ່ວນ ຫຼື ການວິເຄາະກໍ່ໄດ້. ແຕ່ໃນການຕຽມບົດເທດແທນທີ່ຈະແຍກເປັນແຕ່ລະສ່ວນເຮົາເອົາສ່ວນປະກອບມາເຂົ້າກັນເປັນຕອນ. ຕໍ່ໄປນີ້ມີຮູບຂອງເຊືອກ

ຮູບໃດສະແດງເຖິງການແຍກເປັນແຕ່ລະສ່ວນ? ____________________

ຮູບໃດສະແດງເຖິງການເອົາແຕ່ລະສ່ວນມາປະກອບ? ____________________



ຮູບ ກ



ຮູບ ຂ

**41** ກ. ຖ້າວ່າເຮົາມີເປັນຕ່ອນແລ້ວມາແຍກເປັນສ່ວນແມ່ນເປັນການວິເຄາະຫຼື ການປະກອບເຂົ້າກັນ? ____________________

ຂ. ຖ້າຈະເອົາຫຼາຍສ່ວນມາປະກອບເປັນອັນໜຶ່ງເດ? ____________________

**42** ໃນ 6 ປະການຕໍ່ໄປນີ້ ຈະເອົາ 4 ສ່ວນໃດມາເປັນສ່ວນປະກອບບົດເທດສະໜາ? (ເລືອກໝາຍເອົາສີ່ຂໍ້)

ກ. ຄຳແນະນຳ.

ຂ. ເວົ້າຄຳຕະຫຼົກ

ຄ. ອະທິບາຍຕອນພະຄຳພີ.

ງ. ຍົກຕົວຢ່າງຈາກຊີວິດປະຈຳວັນ

ຈ. ເຫຼົ່າເລື່ອງສ່ວນຕົວຫຼາຍ

ສ. ນຳຕອນພະຄຳພີມາໃຊ້.




**43** ບາດນີ້ທ່ານເຫັນແລ້ວວ່າເພື່ອສຶກສາພະຄຳພີເຮົາເຄີຍແຍກເປັນສ່ວນ ຖ້າວ່າເຮົາຈະຕຽມບົດເທດສະໜາເຮົາ ເຄີຍເອົາແຕ່ລະສ່ວນມາປະກອບເຂົ້າກັນ. ຖ້າວ່າຈະເອົາສີ່ສ່ວນນີ້ມາແຕ່ງບົດເທດສະໜາໄວ້ຕາມໃນຮູບຕໍ່ໄປນີ້ສະແດງເຖິງການວິເຄາະຫຼື ການປະກອບເຂົ້າກັນ?

____________________________________________________

**44** ເວລາໃດທີ່ພໍ່ແມ່ໄດ້ເກີດມີລູກ ເດັກຄົນນັ້ນມີສ່ວນເກີດຈາກທາງພໍ່ແລະທາງແມ່ດ້ວຍ. ການນັ້ນຄືການປະກອບ ເຂົ້າກັນແຕ່ລູກຜູ້ທີ່ເກີດມານັ້ນເປັນອີກຄົນໜຶ່ງຕ່າງຫາກ ການເອົາສ່ວນປະກອບມາເຂົ້າກັນນັ້ນໝາຍຄວາມວ່າຢ່າງໃດ? (ເລືອກ)

ກ. ແມ່ນມີອັນໃໝ່ທີ່ປະກອບຈາກສ່ວນເກົ່າ

ຂ. ຫຼາຍສ່ວນເກົ່າກໍ່ຍັງຫຼາຍສ່ວນຢູ່

ຄ. ທີ່ຈິງມີແຕ່ຕອນດຽວທີ່ເຫັນຈາກຫຼາຍແງ່

**45** ກ. ແຕ່ກ່ອນຈະເທດສະໜາບໍ່ແມ່ນພຽງແຕ່ຈະຕຽມບົດເທດສະໜາໄວ້ຢ່າງດຽວ ແຕ່ຍັງຕ້ອງຕຽມຕົວເອງໄວ້ອີກ. ລູ້ດສະຕຽນທຸກໆຄົນມີເຄື່ອງອາວຸດໃດທີ່ເປັນປະໂຫຍດໃນການຕໍ່ສູ້ພະຍາມານ? ________________________________

ແລະ ____________________________________

ຂ. ເຄື່ອງອາວຸດເຊັ່ນດຽວກັນນັ້ນເປັນປະໂຫຍດໃນການຕຽມຕົວໄວ້ເທດສະ ນາມີເຄື່ອງອາວຸດໃດ ທີ່ເປັນປະ ໂຫຍດໃນການຕຽມຕົວໄວ້ກ່ອນຈະເທດສະໜາ? ________________

ແລະ ____________________________________

**46** ເມື່ອທ່ານຈະຕຽມບົດເທດສະໜາໄວ້ທ່ານຈະຕ້ອງ...

ແນະນຳສະເໜີເລື່ອງ

ອະທິບາຍຕອນພະຄຳພີ

ຍົກຕົວຢ່າງຈາກຊີວິດປະຈຳວັນ

ສຸດທ້າຍນຳຕອນພະຄຳພີມາໃຊ້ໃນຊີວິດ

ແຕ່ລະບົດເທດສະໜານັ້ນເຖິງຈະປະກອບເຂົ້າກັນຈາກຫຼາຍສ່ວນກໍ່ຕາມຈະເປັນຕອນພະຄຳພີທີ່ຜູ້ອື່ນເຄີຍຍົກມາເທດກໍ່ຕາມ. ແຕ່ບົດເທດສະໜານັ້ນຈະໃໝ່ຢູ່ສະເໝີເພາະຄຳໃໝ່ໆນັ້ນຈະໄດ້ມາທາງຄຳອ້ອນວອນດ້ວຍພະວິນຍານບໍລິສຸດຂອງພະເຈົ້າປະທານໃຫ້. ທ່ານຢ່າລືມວ່າຕ້ອງອະທິບາຍແລ້ວຕໍ່ໄປຈະເຮັດຢ່າງໃດຕອນສຸດທ້າຍ? ______________________

*ຢ່າລືມເປີດໄປຕອບບົດເສັງເລີຍ!*

**ຄຳຕອບ:**

**1** *ກ. ມັດທາຍ ບົດ 5-7 ຂ. 9 ສ່ວນ. ຄ. ແຍກແຕ່ລະໄລຍະ (ຫຼື ວິເຄາະ ວິໃຈ)*

**2** *ພະຄຳພີ*

**3** *ພະຄຳພີ*

**4** *ພະຄຳພີ*

**5** *ກ. ພະຄຳພີ ຂ. ພະຄຳພີ*

**6** *ພະຄຳພີ*

**7** *ບົດເທດສະໜາ ຄ. ບົດເທດສະໜາ ຄ.*

**8** *ພະຄຳພີ*

**9** *ພົບ*

**10** *ພົບ*

**11** *ໃຫ້ເຂົາລັບຄວາມພົບ*

**12** *ສຳເລັດ...ດີ*

**13** *ລັບເຊື່ອໃນ ພະເຢຊູ*

**14** *ສຳເລັດ*

**15** *ຈາກພະຄຳພີ*

**16** *ກ. ໃຫ້ເຂົາຮັບເຊື່ອໃນ ພະເຢຊູ ຂ. ໃຫ້ບັນລຸຜົນສຳເລັດ*

**17** *ກ. ແລະ ຄ. ຖືກ*

**18** *ຂ. ຄ. ແລະ ງ. ຖືກ*

**19** *ຄ. ຖືກ*

**20** *ຂ. ຖືກ ຂໍ້ ຂ.*

**21** *ກ. ຖືກ*

**22** *ຄ. ຖືກ*

**23** *ໜຶ່ງຕອນ*

**24** *ກ. ຖິ້ມໃຈເກົ່າເອົາໃຈໃໝ່ຮັບເຊື່ອໃນ ພະເຢຊູ. ຂ. ພະຄຳພີ*

**ຄຳຕອບ (ຕໍ່):**

**25** ຄ. ອະທິບາຍ. ຈ. ອະທິບາຍ. ງ. ນຳມາໃຊ້. ສ. ນຳມາໃຊ້.

**26** ກ. ອະທິບາຍ ຂ. ນຳມາໃຊ້ ຖືກຕາມລຳດັບ

**27** ກ. ຄຳອະທິບາຍ ຂ. ຄຳນຳມາໃຊ້ ຄ. ຄຳອະທິບາຍກ່ອນ.

**28** ງ. ຖືກ

**29** ຂ. ຖືກ

**30** ສົນໃຈພະຄຳພີ.

**31** ສິ່ງແວດລ້ອມ

**32** ກ. ຄ. ງ. ສ. ແລະ ຊ. ຖືກ ແຕ່ບໍ່ຕາຍຕົວ

**33** ອະທິບາຍ...ນຳມາໃຊ້

**34** ກ. ພະຄຳພີ ຂ. ໜຶ່ງຕອນ ຄ. ໜຶ່ງຕອນ

**35** ຄຳແນະນຳ

**36** ຈັບໃຈຜູ້ຟັງໃຫ້ສົນໃຈພະຄຳພີ ຫຼາຍກວ່າສິ່ງອື່ນໆ (ຄຳຄ້າຍກັນກໍ່ໄດ້)

**37** ແລກປ່ຽນຄວາມຄິດເຫັນກັບໝູ່

**38** ອະທິບາຍ ນຳ...ມາໃຊ້

**39** ແລກປ່ຽນຄວາມຄິດເຫັນກັນກັບ ໝູ່

**40** ກ. ແຍກເປັນແຕ່ລະສ່ວນ ຂ. ເອົາແຕ່ລະສ່ວນມາປະກອບເຂົາ

**41** ກ. ວິເຄາະ ຂ. ປະກອບເຂົາກັນ (ການຕຽມບົດເທດ)

**42** ກ. ຄ. ງ. ແລະ ສ. ຖືກ

**43** ການປະກອບເຂົາກັນ

**44** ກ. ຖືກ

**45** ກ. ພະທຳຂອງ ພະເຈົາ ແລະ ພະວິນຍານບໍລິສຸດ.

ຂ. ພະທຳຂອງ ພະເຈົາ ແລະ ພະວິນຍານບໍລິສຸດ.

**46** ນຳມາໃຊ້